# ແຜນກູ້ພັຍໄພລາມປ່າເກາະມາວອິ

**ຄໍາຖາມທີ່ຖາມກັນເລື້ອຍໆ ກ່ຽວກັບການໃຊ້ວັກຖຸ ຊອຍແທກ ເພື່ອເກັບດິນ ຂີ້ເຖົ່າແລະເສດເຄື່ອງເພພັງໃຫ້ຢູ່ຄົງທີ່ ພາຍໃນເຂດ**

ພືສະຈິກາ 1, 2023

*ເກາະມາວອິໄດ້ຕອບສນອງແກ່ຊາວໂລກຢ່າງຫຼວງຫຼາຍ. ໃນນາມແຂກຢ້ຽມຢາມ, ຖືເປັນກຽດໃຫ້ການອູ້ມຊູເປັນການຕອບແທນ.*

*ຂີ້ເຖົ່າ ແລະເສດສິ່ງຖືກເຜົາໄໝ້ຕາມສະຖານທີ່ຖືກເສັຽຫາຍຍ້ອນອັກຄີໄພໄພລາມປ່າໃນເກາະມາວອິ ອາດເກີດເປັນໄພອັນຕະຣາຍແກ່ສັດປ່າ, ສັດນໍ້າ ແລະສຸຂະພາບຂອງມະນຸດເຊັ່ນດຽວກັນ ຍ້ອນວ່າມີເສດສານພິດຄ້າງຄາຢູ່ເຊັ່ນ ອາສບາສຕັດສ໌, ຂີ້ກົ່ວ ແລສານພິດ ເບື່ອເມົາ. ຝຸ່ນຂີ້ເຖົ່າຈະພັດປີວໄປຕາມລົມ, ໄຫຼໄປຕາມນໍ້າ ແລະກັບຄືນສູ່ທີ່ສະຖານໄດ້ ໃນຂັ້ນຕອນກວດລ້າງຍົກຍ້າຍເອົາອອກໜີໄປ ຫຼື ຍາມຖືກແຕະຕ້ອງ. ແມ່ນໃຜເປັນຜູ້ຕັດສິນ.*

## ໃຜເປັນຜູ້ຕັດສິນໃນການໃຊ້ຢາສີດກັນດິນເຈື່ອນ?

ເຂດປົກຄອງ ມາວອິເຄົາທີ ດ້ວຍຄໍາແນະນໍາຈາກ ກະຊວງສາທາ ຣັດຮາວາຍອິ (DOH), ກົມກອງກູ້ໄພສຸກເສີນແຫ່ງຊາດ (FEMA), ກົມວັສະດຸກໍ່ສ້າງຂອງກອງທັບແຫ່ງຊາດ (USACE), ກົມສງວນປ້ອງກັນສິ່ງແວດລ້ອມ (EPA) ໄດ້ຮັບຮູ້ເຫັນດີໃນການນໍາໃຊ້ ວັດຖຸປ້ອງກັນດິນເຈື່ອນ ເພື່ອຄວບຄຸມຂີ້ເຖົ່າ ແລະຂີ້ໃງ່ໃນເຂດທີ່ຖືກເຜົາໄໝ້ເສັຽຫາຍໂດຍອັກຄີໄພ.

ກົມສງວນສິ່ງແວດລ້ອມ(EPA) ໄດ້ເລີ້ມສີດຢາກັນດິນເຈື່ອນໃນເຂດເມືອງ ຄູລາ (Kula) ໃນທ້າຍເດືອນ ກັນຍາ (September) 2023. EPA ກໍໄດ້ເລີ້ມສີດຢາ (Soiltac) ໃສ່ເຂດເມືອງ ລາຫາຍນາ (Lāhainā) ໃນກາຍເດືອນຕຸລາ ພາຍຫລັງທ່ານເຈົ້າເມືອງ ຂອງເມືອງ ມາວອິ ໄດ້ປະກາດອະນຸຍາດໃຫ້ໃຊ້ໄດ້.

## ຜົນສະທ້ອນຕໍ່ສຸຂະພາບຂອງຄົນ ຈາກຂີ້ເຖົ່າແລະເສດວັດຖຸທີ່ຕິດຄ້າງຢູ່ນັ້ນມີຫຍັງແນ່?

ຂີ້ເຖົ່າແລະເສດສິ່ງຂອງເຜົາໄໝ້ ອາດຈະມີສານພິດເປັນໄພເຊັ່ນ ອາສບາສຕັດສ໌, ຂີ້ກົ່ວ, ສານພິດເບື່ອເມົາແລະພິດໄພອັນຕະຣາຍແບບອື່ນໆ. **ນຸ່ງຊຸດປ້ອງກັນຕົວພ້ອມທັງອຸປະກອນປ້ອງກັນໄພ(PPE) ຍາມເຂົ້າໄປແຕະຕ້ອງຂີ້ເຖົ່າຈະຊ່ອຍຜ່ອນຄາຍອັນຕະຣາຍທີ່ຈະເກີດຂຶ້ນແກ່ສຸຂພາບຂອງຄົນ.**

- ຂີ້ເຖົ່າແລະເສດເຄື່ອງເພພັງ ຈະມີຜົງເສດສານຕິດຢູ່ຈຶ່ງອາດຈະເຂົ້າຜ່ານຫລອດລົມຫາຍໃຈຂອງຄົນໄດ້ ແລະຈະເກີດເປັນອາການໄອ, ຄັນດັງ, ຫາຍໃຈຫອບ, ເກີດເປັນພູມແພ້, ແລະເຮັດໃຫ້ພະຍາດຫອບຫືດຮ້າຍແຮງຂຶ້ນຕື່ມ.
- ຂີ້ເຖົ່າມີທາດເຄັມ (pH) ຊຶ່ງສາມາດເຮັດໃຫ້ແສບຕາແລະຄັນຄາຍຄາຍ.

- ຂີ້ເຖົ່າແລະເສດເປັນຝຸ່ນຜົງເຄີຍເຫັນມີສານພິດເຈືອປົນ, ເຊັ່ນອາສແບສຕັດສ໌, ທາດຂີ້ກົ່ວ ແລະສານພິດເບື່ອເມົາ. ການສຳພັດກັບສິ່ງເລົ່ານີ້ໃນຊ່ວງຍາວນານຈະເຮັດໃຫ້ເກີດພະຍາດອັນຕະລາຍເຊັ່ນໂຣກຫົວໃຈ, ເສັ້ນເລືອດຕັນ, ມະເຮັງປອດ ແລະພະຍາດເຮັດໃຫ້ຫາຍໃຈຝືດ.

ມີຂໍ້ມູນເພີ່ມເຕີມອີກກ່ຽວກັບຜົນກະທົບຈາກຂີ້ເຖົ່າຕໍ່ສຸຂະພາບຂອງຄົນ ຫາໄດ້ທີ່: **health.hawaii.gov/mauiwildfires/**

## ຜົນປະໂຍດໃນການນຳໃຊ້ ຢາສີດປ້ອງກັນດິນເຈື່ອນມີຄືແນວໃດ?

- ການໃຊ້ວັດຖຸກັນດິນເຈື່ອນ ຈະລຶດຜ່ອນ ໂອກາດທີ່ ຂີ້ເຖົ່າຈະເຂົ້າໄປນຳລົມຫາຍໃຈ ຫຼືໃນປາກແລະທ້ອງຄົນໄດ້.
- ເປັນແນວທາງຊ່ອຍປ້ອງກັນບໍ່ໃຫ້ຂີ້ເຖົ່າອອກໜີໄປຈາກສະຖານທີ່.
- ການໃຊ້ວັດຖຸກັນດິນເຈື່ອນ ສີດໃສ່ພື້ນທີ່ຈະປ້ອງກັນ ບໍ່ໃຫ້ຂີ້ເຖົ່າ ໃຫລລົງສູ່ທະເລ, ຊຶ່ງຈະເກີດເປັນໄພອັນຕະລາຍແກ່ໂຂດຫີນພື້ນນ້ຳ ແລະສິ່ງແວດລ້ອມຕາມແຄມຝັ່ງມະຫາສະໝຸດ.

## ຢາສີດປ້ອງກັນດິນເຈື່ອນຈະນຳໄປໃຊ້ໃນເຂດໃດແນ່?

- ທີມງານ (EPA) ຈະສີດຢາກັນດິນເຈື່ອນໃສ່ບ່ອນມີຂີ້ເຖົ່າ ແລະ ຈະສີດໄປທົ່ວທຸກເຂດເທື່ອລະຕອນ(ຍົກເວັ້ນເຂດສັກສິດແລະສ່ວນສຳຄັນດ້ານວັທນະທັມ). ຂີ້ເຖົ່າຈະເຮັດໃຫ້ສິ່ງແວດລ້ອມເປິເປື້ອນຈຶ່ງຕ້ອງຄວບຄຸມໃຫ້ດີໆ.ວັດຖຸ (Soiltac) ຈະຖືກກວດລ້າງອອກໃນຂັ້ນຕອນພາກທີ 2 ຂອງໂຄງການໂດຍທີມງານ ກອງທັບແຫ່ງຊາດ  (USACE).

## ວິທີການນຳໃຊ້ ຢາສີດປ້ອງກັນດິນເຈື່ອນ Soiltac ຄືແນວໃດ?

ກ່ອນທີ່ຈະສີດຢາ, ທີມງານ(EPA)ແລະຄະນະນັກຊ້ຽວຊານດ້ານວັທນະທັມຈະກວດກາຢ່າງລະອຽດເບິ່ງວ່າຕອນດິນແຕ່ລະແຫ່ງ ມີການປົກປ້ອງສັດປ່າ, ທີ່ເກັບອາຫານລ້ຽງແມວ, ຫລືສະຖານທີ່ສຳຄັນອື່ນເພື່ອຫຼີກເວັ້ນການເສັຽຫາຍ.

ວັດຖຸສີດປ້ອງກັນນີ້ **ຈະບໍ່ໃຊ້ສີດໃສ່** ເຂດສະຖານທີ່ປະວັດສາດ ຫຼືສະຖານທີ່ປະເພນີວັທະນະທັມ ຫຼືບ່ອນທີ່ຖືກບັກໝາຍໄວ້ໃຫ້ເຫັນວ່າຍົກເວັ້ນໂດຍຂະນະຊ່ຽວຊານທີ່ຕິດຕາມກວດກາສະພາບການຕລອດເວລາ.

- ໃນສະພາບທີ່ພົບເຫັນສິ່ງສຳຄັນດ້ານປະເພນີວັທະນະທັມ ຢັ້ງຢືນໂດຍຂະນະນັກຊ້ຽວຊານ, ທີມງານຈະສີດຕາມວົງອ້ອມຮອບສິ່ງເລົ່ານັ້ນ ຈົນກ່ວາພາຍຫຼັງ ໄດ້ຜ່ານການຄົ້ນຄ້ຳຕື່ມອີກໃນຂັ້ນຕໍ່ໄປ.
- • ຕົວຢ່າງສິ່ງເປັນວັດຖຸໂບຮານແລະສິ່ງສຳຄັນດ້ານວັທະນະທັມທີ່ **ຈະບໍ່ຖືກສີດຢາໃສ່ຄື**:
    - ປ່າຊ້າຝັງສົບ,
    - ຝາຮົ້ວກຳແພງ,
    - ລະຄັງຢູ່ໃນວັດ, ຕຶກຕາມສະຖານທີ່ປະວັດສາດ, ເຊັ່ນວ່າ ໂບດ Waiola , ຫ້ອງການບໍຣິສັດໂຮງງານ Pioneer Mill Co. Office, ແລະ ຕະລາດ Lahaina Store, ແລະ
    - ສິ່ງເປັນທີ່ຮັບຮູ້ກັນທົ່ວໄປວ່າເປັນ ແນວສະຫງວນ ວັດຖຸໂບຮານ ແລະອັດຖິຂອງບັນພະບຸຣຸດທີ່ຕັ້ງຢູ່ Baldwin House, Wo Hing, ແລະ Shingon Mission.

## ລັກຊະນະສະພາບຂອງ ຂີ້ເຖົ່າແລະເສດສິ່ງເຜົາໄໝ້ ເປັນສະພາບຢ່າງໃດ ຫຼັງຈາກໄດ້ຜ່ານການສີດຢາໃສ່ແລ້ວ?

- ວັດຖຸ Soiltac® ຈະແຫ້ງແລະກາຍເປັນສີໃສໆ. ຫລັງຈາກແຫ້ງແລ້ວຈະບໍ່ເປັນພິດໄພເບື່ອເມົາ, ແລະເປັນແນວໃຊ້ປ້ອງກັນໂດຍປົກກະຕິທົ່ວໄປ ເພື່ອຄວບຄຸມຍາມມີຂີ້ໃງ່ແລະຝຸ່ນດິນພັດປິວ.

- ຢາກັນເຈື່ອນມີສີໃສງສ່ອງຊອດເຫັນໄດ້ວ່າມີຫຍັງຢູ່ທາງກ້ອງພາຍໃຕ້ ທີມງານ ກອງທັບຈະເຫັນໄດ້ງ່າຍ
  ໃນຕອນເກັບກູ້ພາກທີ 2
  ຂີ້ເຖົ່າແລະເສດເຄື່ອງເພພັງກໍຈະເກັບແບບກົດກັ້ນເຈົ້າຂອງທີ່ດິນທີ່ຈະເຂົ້າໄປເກັບກູ້ເອົາຊັບສິນບັດໄດ້.

# ບວງຊົນຊາວເມືອງລະເຂົ້າໄປຄົ້ນຫາຊັບສິນພາຍໃນເຄຫະສະຖານຂອງເຂົາເຈົ້າໄດ້ບໍ ຫຼັງຈາກຜ່ານການສີດຢາໃສ່ແລ້ວ?

- ແມ່ນແລ້ວໄດ້,
  ຜູ້ທີ່ເຂົ້າໄປຊອກສະຖານທີ່ຈະເຫັນໄດ້ງ່າຍງຢູ່ທາງກ້ອງຂອງແຜ່ນໃສງນັ້ນແລະຈະເຫັນວ່າມັນແຕກເພພັງງ່າຍຍາມໄປແ ຕະຕ້ອງມັນ ຖ້າວ່າຢາກຂຸດຄົ້ນໃນຂີ້ເຖົ່າ ເພື່ອຫາສິ່ງໃດທີ່ຕ້ອງການ.
- ກົມ EPA ຂໍຮ້ອງໃຫ້ປະຊາຊົນລໍຖ້າ 24 ຊົ່ວໂມງພາຍຫຼັງຈາກສີດຢາແລ້ວກ່ອນທີ່ຈະເຂົ້າໄປຊອກຄົ້ນໃນສະຖານທີ່ ຈຶ່ງຈະເຫັນຜົນໄດ້ດີ. ກົມ EPA ຈະຕິດປ້າຍແຈ້ງບອກວັນເວລາທີ່ໄດ້ສີດຢາ.

# ຖ້າຫາກວ່າຂ້ອຍໄດ້ເຂົ້າໄປແຕະຕ້ອງ ວັດຖຸກັນດິນເຈື່ອນເດ? ແລ້ວເຈົ້າຈະກັບຄືນມາສີດຢາຕື່ມອີກບໍ?

ເທີມງານເຮົາກະໄວ້ຈະຕ້ອງໄດ້ຊີດຢາອີກຕື່ມຕາມແຕ່ວ່າມີການເຂົ້າໄປແຕະຕ້ອງເຂດນ້ອຍຫຫຼາຍປານໃດ(ຫລັງຈາກສີດແລ້ວ). ຈຸດສຳຄັນກ່ອນອື່ນແມ່ນຕ້ອງໄດ້ສີດຢາໃສ່ບ່ອນທີ່ມີຂີ້ເຖົ່າ. ຖ້າຕ້ອງການຢາກໄດ້ຂໍ້ມູນຕື່ມ, ຕິດຕໍ່ຖາມໄດ້ທີ່: **(808) 539-0555**.

# ຊົ່ວລະຍະເວລາດົນນານປານໃດ ຢາສີດປ້ອງກັນດິນເຈື່ອນນີ້ຈະສາມາດເກັບດິນໃຫ້ຢູ່ໄດ້?

ວັດຖຸປ້ອງກັນດິນເຈື່ອນຈະກຸ້ມໄດ້ພາຍໃນ 4 ຫາ 6 ເດືອນ ຖ້າວ່າບໍ່ມີຫຍັງແຕະຕ້ອງທຳລາຍມັນ.

# ດົນປານໃດຢາປ້ອງກັນດິນເຈື່ອນນີ້ຈະຄ້າງຄາຢູ່ໃນທີ່ດິນ ແລະຍາມໃດຈຶ່ງຈະເກັບກວດເອົາອອກໄປ?

ວັດຖຸປ້ອງກັນດິນເຈື່ອນ ຈະໃຊ້ເປັນວິທີປ້ອງກັນແລະຄວບຄຸມຂີ້ເຖົ່າບໍ່ໄດ້ຊົ່ວລະຍະຍາວຕລອດໄປ.
ພາຍຫຼັງທີ່ເຈົ້າຂອງທີ່ດິນໄດ້ເຂົ້າໄປຢັ້ງມຍາມແລ້ວ ຂະນະທີມວິຊະວະຂອງກອງທັບແຫ່ງຊາດ(the U.S. Army Corps of Engineers) ຈະທຳການກວດລ້າງຂີ້ເຖົ່າ ແລະຂົນອອກໄປ ໃນຂັ້ນຕອນພາກທີ 2.

# ເຈົ້າຂອງທີ່ດິນລະສາມາດຂໍຍົກເວັ້ນບໍ່ໃຊ້ວັດຖຸຢານີ້ໄດ້ບໍ?

ເຈົ້າຂອງທີ່ດິນ **ບໍ່ສາມາດ** ຂໍຍົກເວັ້ນການສີດຢາກັນດິນເຈື່ອນ. ຈະຕ້ອງສີດໃສ່ທົ່ວ **ທັງໝົດທຸກບ່ອນ** ໃນເຂດເມືອງ Lāhainā ເພື່ອປົກປ້ອງສຸຂະພາບຂອງຄົນທ້ອງຖິ່ນ ສິ່ງແວດລ້ອມ ແລະແຄມຝັ່ງທະເລທີ່ຢູ່ໃນສະພາບຊຸດໂຊມ.

## ຂ້ອຍຈະສາມາດເອົາຢາ Soiltac®
## ອອກຈາກສິ່ງຂອງທີ່ເກັບກູ້ຄືນມາໄດ້ຈາກບ້ານເຮືອນຂອງຂ້ອຍໄດ້ບໍ?

ເອົາອອກໄດ້. ໃຫ້ເອົານ້ຳຮ້ອນຖອກໃສ່ລວກອອກ ຫຼືວ່າເອົາອາຍນ້ຳອົບຮ້ອນຣົມປົກຄຸມໄວ້ຊື່ວລະຍະນຶ່ງມັນກໍຈະເປື່ອຍອອກ ແລ້ວເອົາຜ້າອ່ອນໆເຊັດອອກ. ຢາ Soiltac® ຈະຢູ່ໃນສະພາບທີ່ປອດສານພິດ,ໃນເວລາທີ່ກຳທຳການກວດລ້າງຢູ່ກະຕືກັນ.

-

ຖ້າຢາກຮູ້ຂໍ້ມູນຕື່ມອີກ ກ່ຽວກັບເລື່ອງເວົ້າມາຂ້າງເທິງນີ້ ເຂົ້າໄປຊອກເບິ່ງໄດ້ທີ່: soilworks.com/reference-library

ຍັງມີຂໍ້ມູນເພີ້ມຕື່ມອີກກ່ຽວກັບ EPA ແລະ ແນວທາງຊ່ອຍເຫຼືອ ຈາກ ພະແນກເຊີດຊູສັດປ່າຂອງ ເກາະມາວອີ: epa.gov/maui-wildfires

## ຕ້ອງການຢາກຮູ້ເພີ້ມເຕີມກ່ຽວກັບວຍກບໍຣິຫານຂອງ ກົມປົກປ້ອງສິ່ງແວດລ້ອມ EPA ຕິດຕໍ່ໄດ້ທີ່:

Email: R9Wildfiresinfo@epa.gov
Phone: **(808)-539-0555**
Or visit: epa.gov/maui-wildfires
facebook.com/EPAregion9
twitter.com/EPAregion9
instagram.com/epagov or
mauicounty.gov and mauinuistrong.info